# ສະຕຣີລາວໂສພາ

ເນື້ອຮ້ອງ- ທຳນອງ    ວັນພິລາ ສ.ຜາບມີໄຊຍ໌ (ປະພັນທີ່ 6/3/78)
ຂັບຮ້ອງ    ແສງອາຣຸນ ສິດທິພັນ
ດົນຕຣີ    ສາຍສັມພັນ

1- ຈຳປີຈຳປາ    ດວງມາລາ ເມືອງລາວ
ສວຍສົດ ແວວວາວ    ດັ່ງດວງດາວປະດັບທ້ອງຟ້ານະພາກວ້າງໃຫຍ່
ຊີວິດຍິງລາວທົ່ວໄປ    ເໝືອນດວງດອກໄມ້ເບັ່ງບານແຈ່ມໃສ

2- ສະຕຣີຍິງລາວຍຸກໃໝ່    ຈະຢູ່ໃສກໍຍັງເປັນລາວ
ຖ້ອຍຄຳນ້ອງເຈົ້າ    ເມື່ອປາກເວົ້າຫວານຊຶ້ງຕຣຶງໃຈ
ນ້ອງນັ້ນງາມກ່ວາໃຜ    ໂອ້ດອກໄມ້ຊາດລາວເຮົາເອີຍ

3- ແຕ່ງກາຍວິໄລອົງອາດ    ມາຣະຍາດໜ້າຊົມໜ້າເຊີຍ
ເຈົ້ານຸ່ງສິ້ນໄໝ    ບ່ຽງຜ້າໃບໄສໄລແທ້ເອີຍ
ໄດ້ນ້ອງເປັນຄູ່ເຊີຍ    ຄົງສຸຂແທ້ເອີຍຍິງລາວໂສພາ

R    ສະຕຣີລາວເອີຍ    ຢ່າລະເລີຍຮີດເກົ່າ
ຢ່າລະຄອງໃຫ້ເສົ້າ    ປະເພນີຂອງລາວເຮົາໜາ
ກຽຕສັກສີ    ສະຕຣີລາວສູງຄ່າ
ເພີ້ມຄວາມສວຍງາມສງ່າ    ໜ້າຍິນດີແທ້ໜໍຍິງລາວ...

( ຈົບ )